## ແຜນການໄລຍະທີ 2

ໃນໄລຍະ 2 ນີ້, ໂຄງການສົ່ງເສີມກະສິກຳຈະສະໜັບສະໜູນການຜັນຂະຫຍາຍຮູບແບບຂອງການສົ່ງເສີມຢູ່ລາວ ເຊິ່ງໃນປະຈຸບັນແມ່ນໄດ້ຖືກຮັບຮອງເອົາໂດຍກອງສົ່ງເສີມກະສິກຳແຫ່ງຊາດ.

ແຜນການໄລຍະທີ 2 ແມ່ນມີສອງອົງປະກອບ:

- ການເສີມສ້າງຄວາມອາດສາມາດໃນພາກສະໜາມ. ໃນທຸກໆແຂວງໃຫມ່ທີ່ໄດ້ຖືກຄັດເລືອກ ແມ່ນຈະມີການເຝິກອົບຮົມໃຫ້ພະນັກງານແຂວງ ແລະ ເມືອງ, ແລະ ຈະເລີ້ມຕົ້ນເຮັດກິດຈະກຳໃນ 10 ຫມູ່ບ້ານ.
- ໂຄງການຈະສະໜັບສະໜູນ ການເສີມສ້າງຄວາມອາດສາມາດໃນລະດັບຊາດ ໂດຍການສະໜັບສະໜູນການກໍ່ສ້າງສູນການຮ່ວມມືໃນການສົ່ງເສີມ ໃນລະດັບຊາດ, ໂດຍສົ່ງເສີມການແລກປ່ຽນຂໍ້ມູນຂ່າວສານ ແລະ ການຮ່ວມມືທີ່ສົມເຫດສົມຜົນໃນບັນດາອົງການຈັດຕັ້ງຕ່າງໆທີ່ພົວພັນກັບການສົ່ງເສີມ.

ໂດຍຜ່ານອົງປະກອບທັງສອງ, ໂຄງການສົ່ງເສີມກະສິກຳຈະສະໜັບສະໜູນ ຄວາມພະຍາຍາມຂອງລັດຖະບານໃນການເພີ້ມຜົນປະໂຫຍດຂອງການສົ່ງເສີມ ໃຫ້ແກ່ຜູ້ຍິງ ແລະ ຄົນທຸກຈົນ.

ວິທີການສົ່ງເສີມຈະໄດ້ນຳໃຊ້ໃນລະດັບໃດໜຶ່ງໃນ 18 ແຂວງທົ່ວປະເທດໃນທ້າຍປີ 2007, ບວກກັບການຮ່ວມມືກັນຂອງອົງການຈັດຕັ້ງຕ່າງໆທັງຝ່າຍລັດ ແລະ ໂຄງການຂອງຕ່າງປະເທດ ເພື່ອຮັບປະກັນໃຫ້ວິທີການສົ່ງເສີມໃຫ້ມີການຂະຫຍາຍຕົວ ແລະ ມີຄວາມຍືນຍົງ.

## ທີມງານຂອງໂຄງການສົ່ງເສີມກະສິກຳ

**ກອງສົ່ງເສີມກະສິກຳແຫ່ງຊາດ:**

ທີ່ປຶກສາໂຄງການ:
ທ່ານ ດຣ. ຕຽນ ວັນນະສຸກ

ຫົວໜ້າໂຄງການ:
ທ່ານ ສົມໄຊ ສີຊານົນ

**Helvetas:**

ຫົວຫນ້າຊ່ຽວຊານ:
Andrew Bartlett

ຊ່ຽວຊານ:
Andrea Schroeter



ໄປສະນີ: ຕູ້ ປ.ນ 9159, ນະຄອນຫລວງ, ວຽງຈັນ ສ.ປ.ປ ລາວ
ໂທລະສັບ: (856) 21 732162 / 740253
Email: leap@laoex.org
Web: www.LaoEx.org

# ໂຄງການສົ່ງເສີມກະສິກຳ
# LEAP
Laos Extension for Agriculture Project

ໂຄງການຮ່ວມມືຫນຶ່ງລະຫ່ວາງ
ກະຊວງກະສິກຳ ແລະ ປ່າໄມ້ແຫ່ງຊາດ (MAF)
*ແລະ*
ອົງການພັດທະນາ ແລະ
ການຮ່ວມມືຂອງສວິດເຊີແລນ (SDC)

ຈັດຕັ້ງປະຕິບັດໂດຍ
ກອງສົ່ງເສີມກະສິກຳແຫ່ງຊາດ (NAFES)
*ແລະ*
helvetas

## ໂຄງການສົ່ງເສີມກະສິກຳແມ່ນຫຍັງ?

ໂຄງການສົ່ງເສີມກະສິກຳ (LEAP) ແມ່ນໂຄງການກໍ່ສ້າງຄວາມອາດສາມາດ ທີ່ຂຶ້ນກັບກອງສົ່ງເສີມກະສິກຳ-ປ່າໄມ້ແຫ່ງຊາດ (NAFES)

ໂຄງການໄລຍະທີ 1 ແມ່ນເລີ້ມຕົ້ນໃນເດືອນພະຈິກ, ປີ 2001 ແລະ ສິ້ນສຸດໃນທ້າຍເດືອນທັນວາ, ປີ 2004. ໂຄງການໄລຍະທີ 2 ແມ່ນເລີ້ມໃນເດືອນມັງກອນ, ປີ 2005 ແລະ ຈະສືບຕໍ່ຈົນຮອດປີ 2007

## ເປົ້າໝາຍຂອງໂຄງການ

ເປົ້າໝາຍຂອງໂຄງການແມ່ນ:

*ສະໜັບສະໜູນ ການພັດທະນາລະບົບສົ່ງເສີມກະສິກຳທີ່ມີການແບ່ງຂັ້ນຄຸ້ມຄອງ, ມີສ່ວນຮ່ວມ, ມີຫລາຍຮູບຫລາຍສີ ແລະ ມີຄວາມຍືນຍົງເຊິ່ງສາມາດເຂົ້າເຖິງຊາວກະສິກອນທຸກຄົນທັງຍິງ ແລະ ຊາຍຢ່າງເທົ່າທຽມກັນ.*



## ຍຸດທະສາດຂອງໂຄງການ

ການອອກແບບ ໂຄງການສົ່ງເສີມກະສິກຳແມ່ນເປັນພາຄີກັບນະໂຍບາຍຂອງລັດຖະບານເຊິ່ງໄດ້ບັນລະຍາຍໃນວິໄສທັດທາງຍຸດທະສາດສຳລັບຂະແໜງກະສິກຳ (1999) ແລະ ຍຸດທະສາດຂອງການເຕີບໃຫຍ່ ແລະ ຫລຸດຜ່ອນຄວາມທຸກຍາກຂອງຊາດ, (2004) (NGPES 2004).

ໂຄງການສົ່ງເສີມກະສິກຳຍັງກໍ່ສ້າງປະສົບການອັນໃໝ່ໃນລາວໂດຍຜ່ານການສືບພັດທະນາວິທີການສົ່ງເສີມໃນເຂດເປົ້າໝາຍຂອງໂຄງການອື່ນໆເຊັ່ນ: FIAT, PEP, LSFP ແລະ FAO -IPM. ດັ່ງນັ້ນໂຄງການສົ່ງເສີມກະສິກຳແມ່ນກຳລັງຊ່ວຍຮວບຮວມເອົາບັນດາບົດຮຽນທີ່ໄດ້ໃນລາວໃນຊ່ວງໄລຍະເວລາເກືອບ 10 ປີທີ່ຜ່ານມາ.

## ຜົນສຳເລັດໃນໄລຍະທີ 1

ໃນລະຫວ່າງປີ 2001 ແລະ 2004, ໂຄງການໄດ້ນຳໃຊ້ "ລະບົບການເຝິກອົບຮົມແບບນຳ້ຕົກ" ໃນການສະໜັບສະໜູນກິດຈະກຳການສົ່ງເສີມຕ່າງໆໃນ 96 ໝູ່ບ້ານ.

ໃນລະດັບຊາດ, ໂຄງການໄດ້ຈັດຕັ້ງຊຸດຝຶກອົບຮົມ 7 ຄັ້ງໃຫ້ກັບຄູເຝິກສູນກາງ, ເຊິ່ງວ່າເກືອບທຸກທ່ານແມ່ນມາຈາກໜ່ວຍງານເຝິກອົບຮົມສົ່ງເສີມສູນກາງ (CETDU). ຈາກນັ້ນ ຄູເຝິກສູນກາງໄດ້ຈັດການເຝິກອົບຮົມ ແລະ ໃຫ້ການແນະນຳແກ່ພະນັກງານແຂວງ ແລະ ເມືອງຂອງ 3ແຂວງ: ແຂວງຫລວງພະບາງ, ແຂວງສາລາວັນ ແລະ ແຂວງຈຳປາສັກ.

ຊາວກະສິກອນຫລາຍກ່ວາ 1,600 ທ່ານໄດ້ເຂົ້າຮ່ວມໃນໂຄງການຮ່ຳຮຽນ ເຊິ່ງສະໜັບສະໜູນໂດຍນັກສົ່ງເສີມຂັ້ນແຂວງ ແລະ ເມືອງ. ວິຊາທີ່ເປັນທີ່ນິຍົມແມ່ນການຜະລິດເຂົ້າ, ການລ້ຽງໄກ່ ແລະ ການລ້ຽງໝູ. ໃນກຸ່ມການປູກເຂົ້າ, ຊາວກະສິກອນສ່ວນຫລາຍສາມາດເພີ້ມຜົນຜະລິດໄດ້ປະມານ 50 ສ່ວນຮ້ອຍ, ໃນຂະນະທີ່ກຸ່ມການລ້ຽງໄກ່ ແລະ ໝູກໍ່ສາມາດເພີ້ມຜົນຜະລິດໄດ້ 2 ເທົ່າ.

ຮູບແບບທີ່ໄດ້ນຳໃຊ້ໃນໄລຍະທີ 1 ແມ່ນໄດ້ຖືກຮວມຮວມໃນ "ປຶ້ມຄູ່ມືພື້ນຖານສຳລັບການສົ່ງເສີມກະສິກຳ" ເຊິ່ງປະຈຸບັນແມ່ນມີແລ້ວທັງພາສາລາວ ແລະ ອັງກິດ. ຮູບແບບການສົ່ງເສີມແມ່ນໄດ້ຖືກບັນລະຍາຍເຊັ່ນກັນໃນບົດລາຍງານ "ການດັດສົມຮູບແບບການສົ່ງເສີມໃນ ສ.ປ.ປ ລາວ".

## ສະຖານທີ່ໃນການຕິດຕໍ່ພວກເຮົາ

ຫ້ອງການຂອງໂຄງການ ແມ່ນຢູ່ໃນກອງສົ່ງເສີມກະສິກຳແຫ່ງຊາດເຊິ່ງຕັ້ງຢູ່ໃນບ້ານຫ້ວຍຍາງ. ນັບຈາກໃຈກາງເມືອງ, ແມ່ນໃຫ້ຂຶ້ນເໜືອປະມານ 13 ຫລັກເທິງເສັ້ນທາງເລກທີ 13, ຈາກນັ້ນເມື່ອຮອດ 3 ແຍກດອນໜູນແມ່ນໃຫ້ໄປເສັ້ນທາງເລກທີ 10 ທີ່ມຸ່ງໜ້າໄປທາງອ່ອນ. ໄລຍະທາງຈາກ 3 ແຍກດອນໜູນຫາຫ້ອງການແມ່ນປະມານ 2 ກິໂລແມັດ.

